# ພາບລວມຂອງການສິດສອນເໝືອນດັ່ງພຣະຄຣິດ

**ສຸມໃສ່ພຣະເຢຊູຄຣິດ**

| ສິດສອນກ່ຽວກັບພຣະເຢຊູຄຣິດບໍ່ວ່າທ່ານກຳລັງສິດສອນຫຍັງ | ຊ່ວຍໃຫ້ຜູ້ຮຽນມາຫາພຣະເຢຊູຄຣິດ |
|---|---|
| ເນັ້ນໜັກຕົວຢ່າງຂອງພຣະເຢຊູຄຣິດ | ຊ່ວຍໃຫ້ຜູ້ຮຽນຮັບຮູ້ຄວາມຮັກ, ອຳນາດ, ແລະ ຄວາມເມດຕາຂອງພຣະຜູ້ເປັນເຈົ້າໃນຊີວິດຂອງເຂົາເຈົ້າ |
| ສິດສອນກ່ຽວກັບຕຳແໜ່ງ, ບົດບາດ, ແລະ ຄຸນລັກສະນະຂອງພຣະເຢຊູຄຣິດ | ຊ່ວຍໃຫ້ຜູ້ຮຽນເພີ່ມຄວາມເຂັ້ມແຂງໃຫ້ແກ່ຄວາມສຳພັນຂອງເຂົາເຈົ້າກັບພຣະບິດາເທິງສະຫວັນ ແລະ ພຣະເຢຊູຄຣິດ |
| ຊອກຫາສັນຍາລັກທີ່ເປັນພະຍານເຖິງພຣະເຢຊູຄຣິດ | ຊ່ວຍໃຫ້ຜູ້ຮຽນຕັ້ງໃຈພະຍາຍາມເປັນເໝືອນດັ່ງພຣະເຢຊູຄຣິດຫລາຍຂຶ້ນ |

**ຫລັກທຳຂອງການສິດສອນເໝືອນດັ່ງພຣະຄຣິດ**

| ຮັກຜູ້ທີ່ທ່ານສິດສອນ | ສິດສອນໂດຍພຣະວິນຍານ | ສິດສອນຄຳສອນ | ເຊື້ອເຊີນການຮຽນຮູ້ທີ່ພາກພຽນ |
|---|---|---|---|
| ເຫັນຜູ້ຮຽນແບບທີ່ພຣະເຈົ້າເຫັນເຂົາເຈົ້າ. | ກະກຽມຕົວເອງທາງວິນຍານ. | ຮຽນຮູ້ຄຳສອນຂອງພຣະເຢຊູຄຣິດເພື່ອຕົວທ່ານເອງ. | ຊ່ວຍໃຫ້ຜູ້ຮຽນຮັບຜິດຊອບຕໍ່ການຮຽນຮູ້ຂອງເຂົາເຈົ້າ. |
| ສະແຫວງຫາທີ່ຈະຮູ້ຈັກເຂົາເຈົ້າ—ເຂົ້າໃຈສະຖານະການ, ຄວາມຕ້ອງການ, ແລະ ຄວາມເຂັ້ມແຂງຂອງເຂົາເຈົ້າ. | ພ້ອມສະເໝີທີ່ຈະຕອບຮັບການກະຕຸ້ນທາງວິນຍານກ່ຽວກັບຄວາມຕ້ອງການຂອງຜູ້ຮຽນ. | ສິດສອນຈາກພຣະຄຳພີ ແລະ ຖ້ອຍຄຳຂອງສາດສະດາຍຸກສຸດທ້າຍ. | ຊຸກຍູ້ໃຫ້ຜູ້ຮຽນມາຮູ້ຈັກພຣະຜູ້ຊ່ວຍໃຫ້ລອດໂດຍການສຶກສາພຣະກິດຕິຄຸນທຸກວັນ. |
| ອະທິຖານເພື່ອເຂົາເຈົ້າໂດຍກ່າວຊື່. | ສ້າງສະພາບແວດລ້ອມ ແລະ ໂອກາດສຳລັບຜູ້ຮຽນເພື່ອຮັບການສິດສອນໂດຍພຣະວິນຍານບໍລິສຸດ. | ຊ່ວຍໃຫ້ຜູ້ຮຽນສະແຫວງຫາ, ຮັບຮູ້, ແລະ ເຂົ້າໃຈຄວາມຈິງຢູ່ໃນພຣະຄຳພີ. | ເຊື້ອເຊີນໃຫ້ຜູ້ຮຽນກະກຽມທີ່ຈະຮຽນຮູ້. |
| ສ້າງສະພາບແວດລ້ອມທີ່ປອດໄພ ບ່ອນທີ່ທຸກຄົນໄດ້ຮັບຄວາມຄາລົບນັບຖື ແລະ ຮູ້ວ່າການມີສ່ວນຮ່ວມຂອງເຂົາເຈົ້ານັ້ນມີຄຸນຄ່າ. | ຊ່ວຍໃຫ້ຜູ້ຮຽນສະແຫວງຫາ, ຮັບຮູ້, ແລະ ກະທຳຕາມການເປີດເຜີຍສ່ວນຕົວ. | ສຸມໃສ່ຄວາມຈິງທີ່ນຳໄປສູ່ການປ່ຽນໃຈເຫລື້ອມໃສ ແລະ ສ້າງສັດທາໃນພຣະເຢຊູຄຣິດ. | ຊຸກຍູ້ໃຫ້ຜູ້ຮຽນແບ່ງປັນຄວາມຈິງທີ່ເຂົາເຈົ້າກຳລັງຮຽນຮູ້. |
| ຊອກຫາວິທີທີ່ເໝາະສົມໃນການສະແດງຄວາມຮັກຂອງທ່ານ. | ສະແດງປະຈັກພະຍານເລື້ອຍໆ, ແລະ ເຊື້ອເຊີນໃຫ້ຜູ້ຮຽນແບ່ງປັນຄວາມຮູ້ສຶກ, ປະສົບການ, ແລະ ປະຈັກພະຍານຂອງເຂົາເຈົ້າ. | ຊ່ວຍໃຫ້ຜູ້ຮຽນພົບເຫັນຄວາມກ່ຽວຂ້ອງສ່ວນຕົວໃນຄຳສອນຂອງພຣະເຢຊູຄຣິດ. | ເຊື້ອເຊີນໃຫ້ຜູ້ຮຽນດຳລົງຊີວິດຕາມສິ່ງທີ່ເຂົາເຈົ້າກຳລັງຮຽນຮູ້. |